M

# ຄຳແນະນຳ ໃນການຂຽນຄຳຮ້ອງຂັ້ນມັທຍົມຕົ້ນ ສົກສຶກສາ 2007-2008

ຈົ່ງໃຊ້ໃບຄຳຮ້ອງຂັ້ນມັທຍົມຕົ້ນ ເພື່ອຮ້ອງຂໍເອົາ ໂຮງຮຽນຕາມການເລືອກຂອງທ່ານ ສຳຫລັບສົກສຶກສາ 2007-2008 ນີ້. ສຳຫລັບເລື້ອງຂ່າວເພີ້ມເຕີມອີກນັ້ນ ກະຣຸນາເບີ່ງເອົາຄຳປືກສາກັບ ໜັງສືຄູ່ມືໃນການຈົດຊື່ເຂົ້າຮຽນ ສຳຫລັບພໍ່ແມ່ ສົກ 2007-2008 ຫລື ໄປຫາສູກາງຈົດຊື່ແຫ່ງໃດແຫ່ງໜຶ່ງກໍ່ໄດ້.

**ພາກສ່ວນທີ 1** – ຈົ່ງຂຽນ ທີ່ຢູ່ໃສ່ຕາມບ່ອນທີ່ເດັກຂອງທ່ານອາໃສຢູ່ (ທີ່ຢູ່ບ້ານ). ຖ້າເດັກທ່ານຫາກອາໃສຢູ່ ຫລາຍກວ່າ ໜຶ່ງບ້ານແລ້ວ ໃຫ້ຂຽນທີ່ຢູ່ອັນເປັນບ່ອນສຳຄັນຂອງເຂົາໃສ່.

**ພາກສ່ວນທີ 2** – ຈົ່ງຂຽນຣະດັບຊັ້ນຮຽນ ທີ່ເດັກຂອງທ່ານ <u>ຈະເຂົ້າຢູ່</u> ພາຍໃນສົກສຶກສາ 2007-2008 ນີ້ໃສ່.

**ພາກສ່ວນທີ 3 (ຕາມໃຈຊອບ)** – ຈົ່ງຂຽນພາກສ່ວນນີ້ ຖ້າທ່ານຕ້ອງການໃຫ້ເດັກຂອງທ່ານເຂົ້າຢູ່ ໂຮງຮຽນບ່ອນດຽວກັບເດັກຜູ່ອື່ນ ທີ່ຢູ່ໃນຄອບຄົວດຽວກັນນີ້ເຂົ້າຢູ່. ເພື່ອໃຫ້ໄດ້ຕາມສິດໄດ້ກ່ອນໝູ່ ສຳຫລັບໂຮງຮຽນບ່ອນໜຶ່ງ ນັກຮຽນຕ້ອງອາໃສຢູ່ໃນຄອບຄົວດຽວກັນ ແລະ <u>ມີທີ່ຢູ່ບ້ານອັນດຽວກັນ</u> ກັບຜູ້ເປັນພີ່ນ້ອງກັນ ກັບເຂົານີ້. ແມ່ນຄວາມຮັບຜິດຊອບຂອງທ່ານເອງ ທີ່ຮັບປະກັນໃຫ້ ທີ່ຢູ່ບ້ານ ມີຢູ່ໃນບັນທຶກ ສຳຫລັບຜູ້ເປັນພີ່ນ້ອງກັນນີ້ ຕາມທີ່ທ່ານຂຽນລາຍກາຍລົງໃນພາກສ່ວນນີ້ ໃຫ້ເປັນອັນດຽວກັບທີ່ໄດ້ເອົາໃຫ້ ຢູ່ໃນພາກສ່ວນທີ 1. ມີທີ່ຢູ່ບໍ່ຈະແຈ້ງ ອາດເປັນຜົນກີດກັ້ນ ໃຫ້ ເດັກຂອງທ່ານບໍ່ໄດ້ຮັບຕາມສິດທີຄວນໄດ້ກ່ອນຂອງການມີພີ່ນ້ອງ ໃນໂຮງຮຽນນັ້ນ. ຍິ່ງໄປກວ່ານັ້ນ ຜູ້ເປັນພີ່ນ້ອງກັນນີ້ ຕ້ອງໄດ້ຖືກສັບຊ້ອນເຂົ້າໂຮງຮຽນບ່ອນນັ້ນ <u>ໃນສົກສຶກສາ 2007-2008</u> ນີ້. ການມີສິດທີໄດ້ກ່ອນ ຂອງຄວາມເປັນພີ່ນ້ອງກັນນີ້ ບໍ່ໄດ້ເປັນປໂຍດແກ່ ນັກຮຽນໃດ ຖ້າຫາກພີ່ນ້ອງຂອງເຂົາ ບໍ່ໄດ້ຖືກສັບຊ້ອນເຂົ້າ ໃນໂຮງຮຽນນັ້ນ ໃນປີໜ້າ.

**ພາກສ່ວນທີ 4** – ຈົ່ງໃຊ້ **ແຜ່ນເຈັ້ຍໃຫ້ຂຽນເລືອກເອົາຂັ້ນມັທຍົມຕົ້ນ** (ເຈັ້ຍໃຫ້ຂຽນລອງເບີ່ງ) ທີ່ອຳນວຍໃຫ້ ຢູ່ທາງດ້ານຫລັງຂອງຄຳແນະນຳນີ້ ເພື່ອຊ່ວຍທ່ານຂຽນລົງໃນພາກສ່ວນທີ 4. ໂຮງຮຽນທີ່ ຢູ່ຕາມເຈັ້ຍໃຫ້ຂຽນລອງເບີ່ງນີ້ ແມ່ນໄດ້ຂຽນເປັນລາຍການ ລຽງຕາມຕົວພະຍັນຊະນະ ໂດຍໂຮງຮຽນມັທຍົມຕົ້ນທ້ອງຖິ່ນ ແລະ ໂຮງຮຽນປະຖົມທີ່ມີໃຫ້ແລ້ວໃນເຂດນັ້ນ. ໂຮງຮຽນທີ່ ໃຫ້ລົດຮັບສົ່ງ ແກ່ຫລາຍກວ່າໜຶ່ງທ້ອງທີ່ ຊຶ່ງໄດ້ຂຽນລົງເປັນລາຍການຢູ່ໃນຄໍລັ້ມ " ການເລືອກແບບຢູ່ນອກທ້ອງຖິ່ນ." ໂຮງຮຽນທີ່ໃຊ້ແທນກັນໄດ້ / ບໍ່ແມ່ນໂຮງຮຽນຣັຖ ກໍ່ໄດ້ຂຽນເປັນລາຍການລົງ ດ້ວຍ *ຕົວໜັງສືອຽງ ຫລື ບໍ່ຕັ້ງ*ນັ້ນແລ້ວ, ແລະຈຳພວກທີ່ເອົາໃຫ້ ແບບສັບຊ້ອນ ແລະ ລົດຮັບສົ່ງກວ້າງຂວາງທົ່ວເມືອງ ແມ່ນໄດ້ຂຽນລົງ ຢູ່ທາງລຸ່ມຂອງເຈັ້ຍໃຫ້ຂຽ່ລອງເບີ່ງນັ້ນແລ້ວ. ໂຄງການ Spectrum, ແລະ APP ໄດ້ຂຽນເປັນລາຍການລົງ ແຍກກັນຕ່າງຫາກ ຈາກໂຄງການປົກກະຕິຂອງໂຮງຮຽນ ບ່ອນທີ່ມີໃຫ້ໄດ້.

ຕາມເຈັ້ຍໃຫ້ຂຽນລອງເບີ່ງນີ້ ຈົ່ງຂຽນຕົວເລກຕາມການເລືອກເອົາໂຮງຮຽນຂອງທ່ານ (ແຕ່ 1 ເຖິງ 10 ) ຕາມລຳດັບທີ່ທ່ານມັກຫລາຍກວ່າໝູ່ ໂດຍເລີ້ມຈາກເລກ "1" ສຳຫລັບການເລືອກ ເອົາອັນທີໜຶ່ງຂອງທ່ານ. ທ່ານອາດເລືອກເອົາໂຮງຮຽນໃດໆ ທີ່ຂຽນລົງເປັນລາຍການນີ້ ອັນໃດກໍ່ໄດ້, ແຕ່ເດັກຂອງທ່ານ ອາດບໍ່ໄດ້ຮັບສິດ ສຳຫລັບລົດຮັບສົ່ງ ຖ້າທ່ານຫາກເລືອກເອົາ ໂຮງຮຽນ ທີ່ບໍ່ຢູ່ໃນຄຸ້ມໂຮງຮຽນຂອງທ່ານນີ້.

ໃນພາກສ່ວນທີ 4 ນີ້, ຈົ່ງໃຊ້ເຈັ້ຍທີ່ໄດ້ຂຽນແລ້ວນັ້ນ ເພື່ອຂຽນລົງ <u>ຢ່າງໜ້ອຍສາມ</u> ໂຮງຮຽນ ແລະ ໂຄງການ. ເລີ້ມຕົ້ນດ້ວຍການເລືອກອັນທີໜຶ່ງຂອງທ່ານ ແລະ ຂຽນລົງ ດ້ວຍຕົວເລກ ໝາຍປະຈຳໂຮງຮຽນ ແລະ ຊື່ໂຮງຮຽນ ສຳຫລັບການເລືອກແຕ່ລະອັນນັ້ນ. ຖ້າທ່ານຫາກກຳລັງຮ້ອງຂໍເອົາ ໂຄງການ Spectrum ຫລື APP (ທັງສອງໂຄງການນີ້ ຈຳເປັນ ຕ້ອງມີການໄດ້ຮັບສິດທີເຂົ້າ), ຈົ່ງຂຽນລົງໃສ່ໃນ box ໂຄງການໃຫ້ເລືອກທີ່ເໝາະສົມນັ້ນ; ປ່ອຍປະໄວ້ ເປົ່າວ່າງ box ໂຄງການໃຫ້ເລືອກນັ້ນ ຖ້າທ່ານກຳລັງຂໍຮ້ອງເອົາໂຄງການປົກກະຕິ. ຕົວຢ່າງ ຢູ່ຂ້າງລຸ່ມນີ້ ສະແດງໃຫ້ຮູ້ວ່າ ຈະຂຽນໃສ່ໃນພາກສ່ວນທີ 4 ນີ້ ແນວໃດ ຖ້າວ່າ ການເລືອກຂອງທ່ານອັນທີ ໜຶ່ງ ຫາກແມ່ນ ໂຮງຮຽນ Summit, ອັນທີສອງແມ່ນ ໂຄງການ Denny Spectrum, ແລະ ອັນທີສາມແມ່ນ ໂຄງການປົກກະຕິ ຂອງໂຮງຮຽນ Denny:

| | School Number | | | School Name | Optional Program: Spec-trum | Optional Program: APP |
|---|---|---|---|---|---|---|
| 1 | 9 | 4 | 2 | Summit | ○ | ○ |
| 2 | 1 | 0 | 3 | Denny | ● | ○ |
| 3 | 1 | 0 | 3 | Denny | ○ | ○ |

**ພາກສ່ວນທີ 5 (ຕາມໃຈຊອບ)** – ເດັກຂອງທ່ານຈະໄດ້ຖືກເອົາໃສ່ໄວ້ ໃນລາຍຊື່ລໍຖ້າ ສຳຫລັບການເລືອກເອົາໂຮງຮຽນຂອງທ່ານອັນທີໜຶ່ງ ຖ້າເຂົາຫາກບໍ່ໄດ້ສັບຊ້ອນເຂົ້າໃນໂຮງຮຽນນັ້ນ. ຖ້າທ່ານ ຢາກຈະໃຫ້ເດັກຂອງທ່ານ ມີຊື່ຢູ່ໃນລາຍຊື່ລໍຖ້າ ສຳຫລັບໂຮງຮຽນ ນອກເໜືອຈາກການເລືອກເອົາອັນທີໜຶ່ງຂອງທ່ານແລ້ວ ຈົ່ງໝາຍໃສ່ box ຢູ່ໃນພາກສ່ວນທີ 5 ແລະ ຂຽນຊື່ຂອງໂຮງຮຽນ ລໍຖ້າທີ່ທ່ານມັກກ່ອນໝູ່ໃສ່; ທ່ານອາດເລືອກເອົາ ຕາມການເລືອກຂອງທ່ານໃດໆກໍ່ໄດ້ ຈາກພາກສ່ວນທີ 4. ເດັກຂອງທ່ານກໍ່ຈະຖືກຂຽນໄວ້ຢູ່ ໃນລາຍຊື່ໂຮງຮຽນລໍຖ້າ ທີ່ທ່ານມັກຫລາຍກວ່າໝູ່ ເທົ່ານັ້ນ ຖ້າເຂົາຫາກ ໄດ້ຖືກສັບຊ້ອນເຂົ້າຢູ່ໂຮງຮຽນ ທີ່ໄດ້ໝາຍເອົາ ຕາມອັນດັບທີ່ຕ່ຳສຸດ ຢູ່ໃນໃບຄຳຮ້ອງ ກວ່າຢູ່ໃນລາຍຊື່ໂຮງຮຽນລໍຖ້ານັ້ນ. ບໍ່ດັ່ງນັ້ນ ໂຮງຮຽນລໍຖ້າ ກໍ່ຈະ <u>ໝົດສິດລົງທີ່ການເລືອເອົາໂຮງຮຽນອັນທີໜຶ່ງຂອງທ່ານ</u>. ເດັກຂອງທ່ານ ກໍ່ອາດຈະມີຢູ່ແຕ່ລາຍຊື່ໂຮງຮຽນລໍຖ້າ ເທົ່ານັ້ນ.